ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດຢູ່ອາຊີຕາເວັນອອກສ່ຽງໃຕ້ ໄລຍະ II ປະຈຳ ສປປ ລາວ (SEADRM II)

## ແຜນພັດທະສັນຍາ ດ້ານສິ່ງແວດລ້ອມ ແລະ ສັງຄົມ

[ທັນວາ 19, 2025]



Official Use Only

# ແຜນພັນທະສັນຍາດ້ານສິ່ງແວດລ້ອມ ແລະ ສັງຄົມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ), ເຊິ່ງຕໍ່ໄປນີ້ຈະເອີ້ນວ່າ “ຜູ້ຮັບທຶນ” ຈະຈັດຕັ້ງປະຕິບັດໂຄງການຄຸ້ມຄອງຄວາມສ່ຽງໄພພິບັດຢູ່ອາຊີຕາເວັນອອກສຽງໃຕ້ ໄລຍະ II (ໂຄງການ), ໂດຍການມີສ່ວນຮ່ວມຂອງກະຊວງການເງິນ (MOF), ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT), ແລະ ກະຊວງກະສິກຳ ແລະ ປ່າໄມ້ (MAF) [ໝາຍເຫດ: ໃນຕົ້ນສະບັບຂຽນວ່າ ກະຊວງກະສິກຳ ແລະ ສິ່ງແວດລ້ອມ], ຕາມທີ່ໄດ້ກຳນົດໄວ້ໃນສັນຍາການສະໜອງທຶນ (ສັນຍາ). ສະມາຄົມພັດທະນາສາກົນ (The Association) ໄດ້ຕົກລົງເຫັນດີສະໜອງທຶນໃຫ້ແກ່ໂຄງການ, ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

ຜູ້ຮັບທຶນ ຕ້ອງຮັບປະກັນ ໃຫ້ໂຄງການໄດ້ຮັບການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບ ມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມ (ESSs) ແລະ ແຜນຄຳໝັ້ນສັນຍາດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP) ສະບັບນີ້, ໃນຮູບແບບທີ່ສະມາຄົມຍອມຮັບໄດ້. ESCP ແມ່ນສ່ວນໜຶ່ງຂອງສັນຍາ. ເວັ້ນເສຍແຕ່ຈະໄດ້ກຳນົດໄວ້ເປັນຢ່າງອື່ນໃນ ESCP ນີ້, ຄຳສັບທີ່ຂຶ້ນຕົ້ນດ້ວຍຕົວພິມໃຫຍ່ທີ່ໃຊ້ໃນ ESCP ນີ້ ແມ່ນມີຄວາມໝາຍຕາມທີ່ໄດ້ລະບຸໄວ້ໃນສັນຍາ.

ໂດຍບໍ່ຈຳກັດສິ່ງທີ່ກ່າວມາຂ້າງເທິງນັ້ນ, ESCP ສະບັບນີ້ ໄດ້ກຳນົດມາດຕະການ ແລະ ການປະຕິບັດທີ່ສຳຄັນ ທີ່ຜູ້ຮັບທຶນຈະຕ້ອງໄດ້ຈັດຕັ້ງປະຕິບັດ ຫຼື ເຮັດໃຫ້ເກີດການຈັດຕັ້ງປະຕິບັດ, ລວມທັງກອບເວລາທີ່ກ່ຽວຂ້ອງ; ການຈັດຕັ້ງສະຖາບັນ, ບຸກຄະລາກອນ, ການຝຶກອົບຮົມ, ການຕິດຕາມ ແລະ ການລາຍງານ; ແລະ ການຄຸ້ມຄອງການຮ້ອງທຸກ. ESCP ຍັງໄດ້ກຳນົດເອກະສານດ້ານສິ່ງແວດລ້ອມ ແລະ ສັງຄົມ (E&S) ທີ່ຈະຕ້ອງໄດ້ກະກຽມ ຫຼື ປັບປຸງ, ປຶກສາຫາລື, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດພາຍໃຕ້ໂຄງການ, ໃຫ້ສອດຄ່ອງກັບມາດຕະຖານ ESSs, ໃນຮູບແບບ ແລະ ເນື້ອໃນທີ່ສະມາຄົມຍອມຮັບໄດ້. ເອກະສານ E&S ດັ່ງກ່າວ ອາດຈະໄດ້ຮັບການປັບປຸງຄືນໃໝ່ເປັນແຕ່ລະໄລຍະ ໂດຍມີການຕົກລົງເປັນລາຍລັກອັກສອນລ່ວງໜ້າຈາກສະມາຄົມ. ຕາມທີ່ໄດ້ກຳນົດໄວ້ໃນສັນຍາທີ່ອ້າງອີງນັ້ນ, ຜູ້ຮັບທຶນ ຕ້ອງຮັບປະກັນວ່າມີງົບປະມານພຽງພໍ ເພື່ອປົກຄຸມຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດ ESCP.

ຕາມການເຫັນດີລະຫວ່າງ ສະມາຄົມ ແລະ ຜູ້ຮັບທຶນ, ESCP ສະບັບນີ້ ຈະໄດ້ຮັບການປັບປຸງຄືນໃໝ່ເປັນແຕ່ລະໄລຍະ ຖ້າມີຄວາມຈຳເປັນ, ເພື່ອສະທ້ອນໃຫ້ເຫັນເຖິງການບໍລິຫານແບບປັບຕົວ (Adaptive Management) ຕໍ່ການປ່ຽນແປງຂອງໂຄງການ ຫຼື ສະພາບການທີ່ບໍ່ໄດ້ຄາດຄິດໄວ້ ຫຼື ເພື່ອຕອບສະໜອງຕໍ່ໝາກຜົນການຈັດຕັ້ງປະຕິບັດໂຄງການ. ໃນກໍລະນີດັ່ງກ່າວ, ສະມາຄົມ ແລະ ຜູ້ຮັບທຶນ ຕົກລົງເຫັນດີທີ່ຈະປັບປຸງ ESCP ເພື່ອສະທ້ອນໃຫ້ເຫັນເຖິງການປ່ຽນແປງເຫຼົ່ານີ້ ຜ່ານການແລກປ່ຽນໜັງສື ທີ່ລົງລາຍເຊັນລະຫວ່າງ ສະມາຄົມ ແລະ ກົມແຜນການ (DOP) ຂອງກະຊວງການເງິນ. ຜູ້ຮັບທຶນ ຈະຕ້ອງເຜີຍແຜ່ ESCP ສະບັບປັບປຸງໃໝ່ໂດຍທັນທີ.



Official Use Only

ໃນພາກຍ່ອຍກ່ຽວກັບ “ຕົວຊີ້ບອກຄວາມພ້ອມໃນການຈັດຕັ້ງປະຕິບັດ” ລຸ່ມນີ້ ໄດ້ກຳນົດບັນດາການປະຕິບັດ ແລະ ມາດຕະການທີ່ຈະຕ້ອງໄດ້ຕິດຕາມ ເພື່ອປະເມີນຄວາມພ້ອມຂອງໂຄງການ ໃນການເລີ່ມຕົ້ນຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບ ESCP ນີ້. ເຖິງຢ່າງໃດກໍ່ຕາມ, ທຸກການປະຕິບັດ ແລະ ມາດຕະການໃນ ESCP ນີ້ ຈະຕ້ອງໄດ້ຮັບການຈັດຕັ້ງປະຕິບັດຕາມທີ່ກຳນົດໄວ້ໃນຫ້ອງ “ກອບເວລາ” (Timeframe) ຢູ່ລຸ່ມນີ້ ໂດຍບໍ່ຄຳນຶງວ່າພວກມັນຈະຖືກລະບຸໄວ້ໃນພາກຍ່ອຍທີ່ອ້າງອີງນັ້ນຫຼືບໍ່.

| ບັນດາມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| **ການຈັດຕັ້ງປະຕິບັດ ແລະ ການສະໜອງດ້ານຂີດຄວາມສາມາດ** | | | |
| A | **ໂຄງຮ່າງການຈັດຕັ້ງ**<br>**ກ. ປັບປຸງ ແລະ ສ້າງຕັ້ງໜ່ວຍງານຄຸ້ມຄອງໂຄງການ (PMU)** ຢູ່ກະຊວງການເງິນ (MOF), ໜ່ວຍງານຄຸ້ມຄອງອົງປະກອບ (CMU) ຢູ່ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT) ແລະ ກະຊວງກະສິກຳ ແລະ ປ່າໄມ້ (MAF), ແລະ ໜ່ວຍງານຈັດຕັ້ງປະຕິບັດໂຄງການ (PIU) ຢູ່ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ໃນແຕ່ລະແຂວງເປົ້າໝາຍ. ແຕ່ງຕັ້ງຜູ້ປະສານງານດ້ານສິ່ງແວດລ້ອມ ແລະ ສັງຄົມ (ESFP) ທີ່ມີຄຸນວຸດທິ ຈຳນວນ 01 ທ່ານ ຢູ່ PMU, CMU1, CMU2, ແລະ ESFP ຈຳນວນ 02 ທ່ານ ຢູ່ແຕ່ລະ PIU. ຈັດຈ້າງທີ່ປຶກສາອາວຸໂສດ້ານສິ່ງແວດລ້ອມ ແລະ ສັງຄົມ (E&S) ແບບບໍ່ເຕັມເວລາ 01 ທ່ານ ຢູ່ CMU1 ເພື່ອຊ່ວຍວຽກ PMU ໃນການຮັບຜິດຊອບລວມຂອງໂຄງການ ດ້ານວຽກງານທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ແລະ ສັງຄົມ, ທີ່ປຶກສາດ້ານສິ່ງແວດລ້ອມ ແລະ ສັງຄົມ ແບບເຕັມເວລາ 01 ທ່ານ ແລະ ຊ່ຽວຊານຜູ້ຊ່ວຍດ້ານສິ່ງແວດລ້ອມ ແລະ ສັງຄົມ ແບບເຕັມເວລາ 02 ທ່ານ ຢູ່ CMU1. ຮັບປະກັນໃຫ້ມີການຈັດສັນຊັບພະຍາກອນຢ່າງພຽງພໍ ເພື່ອສະໜັບສະໜູນການຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບ ດ້ານສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS) ຂອງໂຄງການ.<br>**ຂ. ປັບປຸງ ແລະ ສ້າງຕັ້ງຄະນະເຮັດວຽກຕິດຕາມກວດກາດ້ານວຽກງານປ້ອງກັນ (SMWG)** ໃນລະດັບແຂວງ ເພື່ອຊີ້ນຳ-ນຳພາ ຂະບວນການຄຸ້ມຄອງກິດຈະກຳຕ່າງໆ ທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ແລະ ສັງຄົມ.<br>**ຄ. ປັບປຸງ ແລະ ແຕ່ງຕັ້ງທີ່ປຶກສາດ້ານການສະໜັບສະໜູນການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາການກໍ່ສ້າງ** ເຊິ່ງປະກອບມີຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຄຸນວຸດທິ ສຳລັບແຕ່ລະສັນຍາວຽກງານກໍ່ສ້າງ ເພື່ອສະໜັບສະໜູນການຈັດຕຽມ ແລະ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ກ່ຽວຂ້ອງ. | ກ) ແລະ ຂ) – ພາຍຫຼັງວັນທີມີຜົນສັກສິດ ແລະ ໃຫ້ຮັກສາໄວ້ຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ.<br><br>ຄ) ສາມເດືອນ ພາຍຫຼັງວັນທີມີຜົນສັກສິດ ແລະ ໃຫ້ຮັກສາໄວ້ຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ. | ▪ ກະຊວງການເງິນ (MOF)<br>▪ ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT)<br>▪ ກະຊວງກະສິກຳ ແລະ ສິ່ງແວດລ້ອມ (MAE)<br>▪ ຂະແໜງການທີ່ກ່ຽວຂ້ອງ (ຂັ້ນແຂວງ) ໃນບັນດາແຂວງເປົ້າໝາຍຂອງໂຄງການ<br><br>▪ ໜ່ວຍງານຄຸ້ມຄອງໂຄງການ PMU ແລະ ໜ່ວຍງານຈັດຕັ້ງປະຕິບັດໂຄງການ (PIU) |



Official Use Only

| ບັນດາມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| B | ແຜນສ້າງຂີດຄວາມສາມາດ<br>**ກະກຽມ ແລະ ຈັດຕັ້ງປະຕິບັດ ມາດຕະການສ້າງຂີດຄວາມສາມາດ ດັ່ງລຸ່ມນີ້:**<br>• **ການຝຶກອົບຮົມກ່ຽວກັບ ຂໍ້ກຳນົດລວມຂອງຂອບມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມ (ESF),** ມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມ (ESSs) ທີ່ກ່ຽວຂ້ອງ ແລະ ເຄື່ອງມືດ້ານສິ່ງແວດລ້ອມ ແລະ ສັງຄົມ (E&S instruments) ທີ່ໄດ້ຈັດຕຽມຂຶ້ນສຳລັບໂຄງການ ເຊິ່ງລວມມີ: ແຜນຄຳໝັ້ນສັນຍາດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP), ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນຮ່ວມ (SEP), ຂອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF), ຂັ້ນຕອນການຄຸ້ມຄອງແຮງງານ (LMP), ແລະ ຂອບນະໂຍບາຍການຍົກຍ້າຍຈັດສັນ (RPF) ສຳລັບທຸກພາກສ່ວນທີ່ກ່ຽວຂ້ອງຂອງ PMU, CMUs ແລະ PIUs.<br>**ການຝຶກອົບຮົມສະເພາະດ້ານ ສຳລັບ ISWS, PMU, CMU ແລະ ຜູ້ຮັບເໝົາ ກ່ຽວກັບຫົວຂໍ້ຕ່າງໆ (ແຕ່ບໍ່ຈຳກັດພຽງແຕ່ຫົວຂໍ້ເຫຼົ່ານີ້):**<br>• ກະກຽມ, ການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ການລາຍງານ ດ້ານສິ່ງແວດລ້ອມ ແລະ ສັງຄົມ ເຊັ່ນ: SS-ESMP, C-ESMPs, CHMP, BMP, WMP, RPs, EGDP, ກົດລະບຽບການປະພຶດ (COC) ທີ່ກ່ຽວຂ້ອງ ແລະ ສ່ວນປະກອບການຕອບໂຕ້ເຫດການສຸກເສີນ (CERC).<br>• ວຽກງານອາຊີວະອະນາໄມ ແລະ ຄວາມປອດໄພ (OHS) ແລະ ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ (CHS) ລວມທັງການລາຍງານອຸບັດເຫດ/ເຫດການ ຕາມຊຸດເຄື່ອງມືການລາຍງານເຫດການດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIRT).<br>**ການຝຶກອົບຮົມໃຫ້ແກ່ ຊຸມຊົນທ້ອງຖິ່ນ ແລະ ອຳນາດການປົກຄອງ ກ່ຽວກັບຫົວຂໍ້ຕ່າງໆ (ແຕ່ບໍ່ຈຳກັດພຽງແຕ່ຫົວຂໍ້ເຫຼົ່ານີ້):**<br>• ຄວາມປອດໄພທາງບົກ, ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ (CHS), ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນຮ່ວມ (SEP) ລວມທັງການດຳເນີນງານຂອງກົນໄກການຮ້ອງທຸກ (GRM), ແລະ ແຜນພັດທະນາກຸ່ມຊາດພັນ (EGDP). | ກ່ອນການເລີ່ມຕົ້ນບັນດາກິດຈະກຳຂອງໂຄງການ ແລະ ໃຫ້ຮັກສາໄວ້ຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ (CMUs)<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການ (PIUs) |
| **ການຕິດຕາມ ແລະ ການລາຍງານ** | | | |
| C | ລາຍງານປົກກະຕິ | | ▪ ໜ່ວຍງານຄຸ້ມ |



Official Use Only

| ບັນດາມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| | **ການລາຍງານການຕິດຕາມກວດກາ ດ້ານສິ່ງແວດລ້ອມ ແລະ ສັງຄົມ (E&S)**<br>ຂຽນ ແລະ ສົ່ງບົດລາຍງານການຕິດຕາມກວດກາ ປະຈຳ 6 ເດືອນ (Bi-Annual) ໃຫ້ແກ່ສະມາຄົມ ກ່ຽວກັບ ຜົນການຈັດຕັ້ງປະຕິບັດວຽກງານ ດ້ານສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS) ຂອງ ໂຄງການ. ເນື້ອໃນບົດລາຍງານຕ້ອງປະກອບມີ:<br>• **ສະຖານະການກະກຽມ ແລະ ການຈັດຕັ້ງປະຕິບັດ:** ຄວາມຄືບໜ້າຂອງບັນດານິຕິກຳ ຫຼື ເຄື່ອງມືດ້ານ ສິ່ງແວດລ້ອມ ແລະ ສັງຄົມ (E&S instruments) ທີ່ກຳນົດໄວ້ພາຍໃຕ້ແຜນງານການຈັດຕັ້ງ ປະຕິບັດດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP).<br>• **ການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ:** ບົດສະຫຼຸບກິດຈະກຳການປຶກສາຫາລື ແລະ ການມີສ່ວນ ຮ່ວມ ທີ່ໄດ້ຈັດຕັ້ງປະຕິບັດຕາມແຜນການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ (SEP).<br>• **ກົນໄກການແກ້ໄຂຄຳຮ້ອງທຸກ (GRM):** ລາຍລະອຽດຂອງຄຳຮ້ອງທຸກທີ່ໄດ້ຮັບ, ປຶ້ມບັນທຶກການ ຮ້ອງທຸກ ແລະ ຄວາມຄືບໜ້າໃນການແກ້ໄຂບັນຫາຕ່າງໆ.<br>• **ຜົນການປະຕິບັດງານຂອງຜູ້ຮັບເໝົາ:** ການປະເມີນດ້ານ E&S ຂອງຜູ້ຮັບເໝົາ ແລະ ຜູ້ຮັບເໝົາຊ່ວງ ໂດຍອີງຕາມບົດລາຍງານປະຈຳເດືອນຂອງບໍລິສັດຜູ້ຮັບເໝົາ ແລະ ບໍລິສັດທີ່ປຶກສາຜູ້ຄວບຄຸມງານ.<br>• **ສະຖານະການປະຕິບັດຕາມ ESCP:** ບົດສະຫຼຸບລວມກ່ຽວກັບລະດັບຄວາມສອດຄ່ອງ ແລະ ການ ປະຕິບັດຕາມເງື່ອນໄຂທີ່ລະບຸໄວ້ໃນແຜນງານ ESCP. | ສົ່ງບົດລາຍງານປະຈຳ 6 ເດືອນ (Bi-Annual reports) ໃຫ້ທະນາຄານໂລກ ແລະ ປະຕິບັດຢ່າງ ຕໍ່ເນື່ອງຕະຫຼອດໄລຍະການຈັດຕັ້ງປະຕິບັດ ໂຄງການ, ໂດຍເລີ່ມຕົ້ນຫຼັງຈາກວັນທີໂຄງການມີ ຜົນສັກສິດ (Effective Date).<br><br>ຕ້ອງສົ່ງບົດລາຍງານແຕ່ລະສະບັບໃຫ້ທະນາຄານ ໂລກ ບໍ່ໃຫ້ກາຍ 30 ວັນ ຫຼັງຈາກສິ້ນສຸດໄລຍະ ເວລາຂອງການລາຍງານໃນແຕ່ລະຄັ້ງ. | ຄອງໂຄງການ (PMU) |
| D | ບົດລາຍງານປະຈຳເດືອນຂອງຜູ້ຮັບເໝົາ<br>ກຳນົດໃຫ້ຜູ້ຮັບເໝົາ ແລະ ບໍລິສັດທີ່ປຶກສາກວດກາການກໍ່ສ້າງ ສົ່ງບົດລາຍງານການຕິດຕາມ E&S ປະຈຳ ເດືອນ. | ສົ່ງບົດສະຫຼຸບປະຈຳເດືອນ ກ່ຽວກັບຜົນການ ດຳເນີນງານດ້ານສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS) ໃນຮູບແບບບົດ ລາຍງານຄວາມຄືບໜ້າປະຈຳເດືອນ ໃຫ້ແກ່ PMU/CMU ແລະ ໃຫ້ແກ່ສະມາຄົມ (Association) ເມື່ອມີການຮ້ອງຂໍ ຫຼື ຄັດຕິດ ເປັນເອກະສານຊ້ອນທ້າຍຂອງບົດລາຍງານ ທີ່ຈະ ຕ້ອງສົ່ງຕາມຂໍ້ C ຂ້າງເທິງ | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການ PIUs<br>▪ ຜູ້ຮັບເໝົາ |
| E | **ເຫດການ ແລະ ອຸບັດຕິເຫດ** | ແຈ້ງໃຫ້ທະນາຄານໂລກຊາບຢ່າງຊ້າບໍ່ໃຫ້ເກີນ 48 ຊົ່ວໂມງ ພາຍຫຼັງເກີດເຫດການ ຫຼື ອຸບັດຕິເຫດ. ສະໜອງລາຍລະອຽດທີ່ມີໃຫ້ຕາມການຮ້ອງຂໍ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ |



Official Use Only

| | ບັນດາມາດຕະການ ແລະ ການປະຕິບັດທີ່ສຳຄັນ | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| | ແຈ້ງໃຫ້ສະມາຄົມຊາບກ່ຽວກັບເຫດການ ຫຼື ອຸບັດຕິເຫດໃດໆ ທີ່ຕິດພັນກັບໂຄງການ ເຊິ່ງມີ ຫຼື ອາດມີຜົນກະທົບທາງລົບທີ່ຮ້າຍແຮງຕໍ່ສິ່ງແວດລ້ອມ, ຊຸມຊົນທີ່ໄດ້ຮັບຜົນກະທົບ, ສາທາລະນະຊົນ ຫຼື ແຮງງານ; ລວມທັງເຫດການທີ່ພາໃຫ້ມີຜູ້ເສຍຊີວິດ ຫຼື ບາດເຈັບສາຫັດຕໍ່ແຮງງານ ຫຼື ສາທາລະນະຊົນ; ການໃຊ້ຄວາມຮຸນແຮງ, ການຈຳແນກ ຫຼື ການປະທ້ວງ; ຜົນກະທົບທີ່ບໍ່ໄດ້ຄາດຄິດໄວ້ຕໍ່ມໍລະດົກທາງວັດທະນະທຳ ຫຼື ຊັບພະຍາກອນຊີວະນາໆພັນ; ມົນລະພິດຕໍ່ສິ່ງແວດລ້ອມ; ການນຳໃຊ້ແຮງງານບັງຄັບ ແລະ/ຫຼື ແຮງງານເດັກ; ການຍົກຍ້າຍຈັດສັນໂດຍບໍ່ຜ່ານຂະບວນການທີ່ຖືກຕ້ອງຕາມກົດໝາຍ (ການບັງຄັບໃຫ້ອອກຈາກບ່ອນຢູ່ອາໄສ); ການກ່າວຫາ ກ່ຽວກັບການຂູດຮີດທາງເພດ ຫຼື ການລ່ວງລະເມີດທາງເພດ (SEA), ຫຼື ການຄຸກຄາມທາງເພດ (SH); ຫຼື ການລະບາດຂອງພະຍາດ. ສະໜອງລາຍລະອຽດຂອງເຫດການ ຫຼື ອຸບັດຕິເຫດທີ່ມີໃຫ້ແກ່ສະມາຄົມ ເມື່ອມີການຮ້ອງຂໍ.<br><br>ຈັດຕັ້ງໃຫ້ມີການທົບທວນເຫດການ ຫຼື ອຸບັດຕິເຫດຢ່າງເໝາະສົມ ເພື່ອຊອກຫາສາເຫດເບື້ອງຕົ້ນ, ສາເຫດທີ່ແຝງຢູ່ ແລະ ສາເຫດທີ່ແທ້ຈິງ. ກະກຽມ, ຕົກລົງເຫັນດີກັບສະມາຄົມ ແລະ ຈັດຕັ້ງປະຕິບັດແຜນການແກ້ໄຂ ເຊິ່ງກຳນົດມາດຕະການ ແລະ ການຈັດຕັ້ງປະຕິບັດເພື່ອແກ້ໄຂເຫດການ ຫຼື ອຸບັດຕິເຫດດັ່ງກ່າວ ແລະ ປ້ອງກັນບໍ່ໃຫ້ເກີດຂຶ້ນຊ້ຳອີກ. | ສົ່ງບົດລາຍງານການທົບທວນ ແລະ ແຜນການແກ້ໄຂໃຫ້ທະນາຄານໂລກ ຢ່າງຊ້າບໍ່ໃຫ້ເກີນ 10 ວັນ ນັບຈາກມື້ສົ່ງແຈ້ງການເບື້ອງຕົ້ນ, ຍົກເວັ້ນໃນກໍລະນີທີ່ມີການຕົກລົງກັນເປັນລາຍລັກອັກສອນຢ່າງອື່ນກັບທາງສະມາຄົມ. | CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs<br>▪ ຜູ້ຮັບເໝົາ |
| **ມສສ 1: ການປະເມີນ ແລະ ການຄຸ້ມຄອງ ຄວາມສ່ຽງ ແລະ ຜົນກະທົບ ດ້ານສິ່ງແວດລ້ອມ ແລະ ສັງຄົມ** | | | |
| 1.1 | 1. ຮັບຮອງ ແລະ ຈັດຕັ້ງປະຕິບັດ ຂອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF), ຂັ້ນຕອນການຄຸ້ມຄອງແຮງງານ (LMP), ຂອບການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ (EGEF), ຂອບນະໂຍບາຍການຍົກຍ້າຍຈັດສັນ (RPF) ແລະ ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ (SEP) ໃຫ້ສອດຄ່ອງກັບຂໍ້ກຳນົດຂອງຂອບມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ (ESF).<br>2. ກະກຽມ ແລະ ຈັດຕັ້ງປະຕິບັດ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ສະເພາະພື້ນທີ່ (SS-ESMP), ແຜນປະຕິບັດງານການຍົກຍ້າຍຈັດສັນ (RAP) ແລະ ແຜນການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ (EGEP) ສຳລັບໂຄງການຍ່ອຍ ຢູ່ແຂວງອຸດົມໄຊ.<br>3. ກະກຽມໂດຍອີງຕາມການຄັດກອງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ຈັດຕັ້ງປະຕິບັດໃນພາກສ່ວນທີ່ກ່ຽວຂ້ອງ ສຳລັບ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ສະເພາະພື້ນທີ່ (SS-ESMP), ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງຜູ້ຮັບເໝົາ (C-ESMP), ແຜນປະຕິບັດງານການຍົກຍ້າຍຈັດສັນ (RAP), | 1. ຮັບຮອງ ແລະ ຈັດຕັ້ງປະຕິບັດ ພາຍຫຼັງວັນທີມີຜົນສັກສິດ ແລະ ປະຕິບັດຕໍ່ເນື່ອງຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ.<br>2. ກ່ອນວັນທີມີຜົນສັກສິດ ແລະ ປະຕິບັດຕໍ່ເນື່ອງຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ.<br>3. ກ່ອນການຄັດເລືອກຜູ້ຮັບເໝົາກໍ່ສ້າງ ແລະ ກ່ອນການເລີ່ມກິດຈະກຳຂອງໂຄງການຍ່ອຍ ແລະ ປະຕິບັດຕໍ່ເນື່ອງຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMU C1<br>▪ ຜູ້ຮັບເໝົາ |

| ບັນດາມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
| --- | --- | --- | --- |
| | ແຜນພັດທະນາກຸ່ມຊົນເຜົ່າ (EGDP), ແຜນການຄຸ້ມຄອງມໍລະດົກທາງດ້ານວັດທະນະທໍາ (CHMP), ແຜນການຄຸ້ມຄອງຂີ້ເຫຍື້ອ (WMP), ແລະ LMP ລວມທັງວຽກງານສຸຂະອະນາໄມ, ຄວາມປອດໄພ ແລະ ສິ່ງແວດລ້ອມ (ESHS) ແລະ ຄວາມປອດໄພຂອງຊຸມຊົນ (CHS) ໃຫ້ສອດຄ່ອງກັບຄໍາແນະນໍາ ແລະ ຂັ້ນຕອນທີ່ໄດ້ກໍານົດໄວ້ໃນ ESMF, SEP, LMP ແລະ RPF ທີ່ລະບຸໄວ້ໃນຂໍ້ 1 ຂ້າງເທິງ.<br>4. ກະກຽມ ແລະ ນໍາໃຊ້ ການປະເມີນສິ່ງແວດລ້ອມ ແລະ ສັງຄົມ ເຊີງຍຸດທະສາດ (SESA) ສໍາລັບແຜນແມ່ບົດ , ການສຶກສາຄວາມເປັນໄປໄດ້ ແລະ/ຫຼື ນະໂຍບາຍຕ່າງໆ ທີ່ໄດ້ຮັບການສະໜັບສະໜູນພາຍໃຕ້ໂຄງການ SEADRM II.<br>5. ປັບປຸງ ແລະ ນໍາໃຊ້ ສໍາລັບອົງປະກອບ C3.1 ເຂົ້າໃນແຜນຮັບມືເຫດການສຸກເສີນຂອງລາວ (LCP) ໂດຍສະທ້ອນໃຫ້ເຫັນບົດຮຽນທີ່ຖອດຖອນໄດ້ ຈາກການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ແລະ ສັງຄົມ ພາຍໃຕ້ RETF (P505224), ລວມທັງ (i) ຮັບປະກັນວ່າ ມາດຕະການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ແມ່ນມີຄວາມສອດຄ່ອງກັບລັກສະນະ ແລະ ສະຖານທີ່ຂອງກິດຈະກໍາ ທີ່ໄດ້ຮັບທຶນຜ່ານການຈ່າຍເງິນປະກັນໄພ, (ii) ຮັບປະກັນວ່າ ມາດຕະການສິ່ງແວດລ້ອມ ແລະ ສັງຄົມ ແມ່ນສາມາດປະຕິບັດໄດ້ຕົວຈິງ ພາຍໃຕ້ສະພາບການຕອບໂຕ້ເຫດການສຸກເສີນຂອງກິດຈະກໍາເຫຼົ່ານີ້, ແລະ (iii) ພິຈາລະນາເຖິງຂີດຄວາມສາມາດ ໃນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງລັດຖະບານລາວ. | 4. ກ່ອນການສະຫຼຸບຂັ້ນສຸດທ້າຍຂອງແຜນແມ່ບົດ, ການສຶກສາຄວາມເປັນໄປໄດ້ (FS) ແລະ/ຫຼື ນະໂຍບາຍຕ່າງໆ ທີ່ໄດ້ຮັບການສະໜັບສະໜູນຈາກໂຄງການ.<br>5. ກ່ອນທີ່ກົມມະທັນປະກັນໄພ ຫຼື ເຄື່ອງມືໃນການໂອນຄວາມສ່ຽງ ທີ່ໄດ້ຮັບທຶນພາຍໃຕ້ ອົງປະກອບ 3.1 ຈະມີຜົນສັກສິດ. | • ໜ່ວຍງານຄຸ້ມຄອງໂຄງການ PMU |
| 1.2 | **ການຄຸ້ມຄອງຜູ້ຮັບເໝົາ**<br>1.ສອດແຊກບັນດາເນື້ອໃນທີ່ກ່ຽວຂ້ອງຂອງແຜນງານການຢືນຢັນການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ແລະ ສັງຄົມ (ESCP), ເຊິ່ງລວມມີ (ແຕ່ບໍ່ຈໍາກັດພຽງແຕ່): ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມສະເພາະພື້ນທີ່ (SS-ESMPs), ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ (SEP), ຂັ້ນຕອນການຄຸ້ມຄອງແຮງງານ (LMP), ວຽກງານສຸຂະອະນາໄມ, ຄວາມປອດໄພ ແລະ ສິ່ງແວດລ້ອມ (ESHS), ຄວາມປອດໄພຂອງຊຸມຊົນ (CHS) ແລະ ກົດລະບຽບຈັນຍາບັນທີ່ກ່ຽວຂ້ອງ ເຂົ້າໃນຂໍ້ກໍານົດດ້ານສິ່ງແວດລ້ອມ ແລະ ສັງຄົມຂອງເອກະສານການຈັດຊື້-ຈັດຈ້າງ ແລະ ສັນຍາກັບຜູ້ຮັບເໝົາ ແລະ ບໍລິສັດທີ່ປຶກສາກວດກາຕາມຄວາມຈໍາເປັນ. ຫຼັງຈາກນັ້ນ, ຕ້ອງຮັບປະກັນວ່າ ຜູ້ຮັບເໝົາ ແລະ ບໍລິສັດທີ່ປຶກສາກວດກາ ໄດ້ປະຕິບັດຕາມຢ່າງເຂັ້ມງວດ ແລະ ພວກເຂົາຕ້ອງກໍານົດໃຫ້ກໍາມະກອນ ແລະ ຜູ້ຮັບເໝົາຊ່ວງ ປະຕິບັດຕາມຂໍ້ກໍານົດດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ລະບຸໄວ້ໃນສັນຍາຂອງຕົນ. ພ້ອມທັງ ສະໜອງສໍາເນົາສັນຍາທີ່ກ່ຽວຂ້ອງ ກັບຜູ້ຮັບເໝົາ/ຜູ້ຮັບເໝົາຊ່ວງ ແລະ ບໍລິສັດທີ່ປຶກສາກວດກາ ໃຫ້ແກ່ສະມາຄົມ (The Association/World Bank). | 1. ໃຫ້ຖືເປັນສ່ວນໜຶ່ງຂອງການກະກຽມເອກະສານການຈັດຊື້-ຈັດຈ້າງ ແລະ ສັນຍາທີ່ກ່ຽວຂ້ອງ, ແລະ ຕິດຕາມກວດກາຜູ້ຮັບເໝົາຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ.<br>2. ພາຍໃນ 60 ວັນ ຫຼັງຈາກການຕົກລົງມອບສັນຍາ ແລະ ຫຼັງຈາກນັ້ນ ໃຫ້ຕິດຕາມກວດກາການຈັດຕັ້ງປະຕິບັດຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMU C1<br>▪ ຜູ້ຮັບເໝົາ |



Official Use Only

| | ບັນດາມາດຕະການ ແລະ ການປະຕິບັດທີ່ສຳຄັນ | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| | 2.ກຳນົດໃຫ້ຜູ້ຮັບເໝົາທັງໝົດ ເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍຂອງຕົນເອງ ໃນການກະກຽມ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງຜູ້ຮັບເໝົາ (C-ESMPs) ໃຫ້ສອດຄ່ອງກັບ ESCP, SEP, LMP ລວມທັງ ESHS, CHS ແລະ ກົດລະບຽບຈັນຍາບັນທີ່ກ່ຽວຂ້ອງ ທີ່ໄດ້ກຳນົດໄວ້ໃນຂອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF). | | |
| 1.3 | **ການຊ່ວຍເຫຼືອດ້ານເຕັກນິກ**<br>ດຳເນີນການໃຫ້ຄຳປຶກສາ, ການສຶກສາຕ່າງໆ ລວມທັງການສຶກສາຄວາມເປັນໄປໄດ້ (Feasibility Studies), ແຜນແມ່ບົດ (Master Plan), ການອອກແບບລາຍລະອຽດ (Detailed Designs), ແລະ ກິດຈະກຳການຊ່ວຍເຫຼືອດ້ານເຕັກນິກອື່ນໆ ພາຍໃຕ້ໂຄງການ ໃຫ້ສອດຄ່ອງກັບເນື້ອໃນຂອບເຂດວຽກ (Terms of Reference - ToR) ທີ່ສະມາຄົມ (Association) ສາມາດຮັບຮອງເອົາໄດ້, ເຊິ່ງຕ້ອງໃຫ້ສອດຄ່ອງກັບມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ (ESSs) ທີ່ກ່ຽວຂ້ອງ. ຫຼັງຈາກນັ້ນ, ໃຫ້ກະກຽມ ແລະ ສະຫຼຸບຜົນໄດ້ຮັບຂອງກິດຈະກຳດັ່ງກ່າວ ໃຫ້ຖືກຕ້ອງຕາມເນື້ອໃນຂອບເຂດວຽກ (ToR).<br>ກະກຽມ ແລະ ຈັດຕັ້ງປະຕິບັດຂັ້ນຕອນກ່ຽວກັບ: (i) ຂະບວນການຮ່າງ ແລະ ອະນຸມັດ (ລວມທັງການກວດຜ່ານໂດຍສະມາຄົມ) ຂອງເນື້ອໃນຂອບເຂດວຽກ (ToR), ແຜນວຽກຂອງກິດຈະກຳການຊ່ວຍເຫຼືອດ້ານເຕັກນິກ ພາຍໃຕ້ໂຄງການ ແລະ (ii) ການກວດກາ ແລະ ການສະຫຼຸບຜົນໄດ້ຮັບຂອງການຊ່ວຍເຫຼືອດ້ານເຕັກນິກດັ່ງກ່າວ ເພື່ອໃຫ້ຄຳແນະນຳ ແລະ ການຊ່ວຍເຫຼືອອື່ນໆ ທີ່ສະໜອງໃຫ້ນັ້ນ ມີຄວາມສອດຄ່ອງກັບມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ (ESSs) ຂໍ້ທີ 1-10. | ຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMU |
| 1.4 | **ການສະໜອງທຶນເພື່ອຕອບໂຕ້ເຫດການສຸກເສີນ [ເບື້ອງຕົ້ນ]**<br>1. ຮັບປະກັນວ່າ ຂອບວຽກງານການຕອບໂຕ້ເຫດການສຸກເສີນ (CERC Framework) ເຊິ່ງລວມມີ ການຄັດກອງ/ການປະເມີນ ດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ການຈັດຕັ້ງປະຕິບັດ (CERC-ESMF) ໄດ້ຮັບການກະກຽມ ແລະ ເປັນເອກະສານເພີ່ມເຕີມໃຫ້ແກ່ ຂອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ຂອງ | ຂໍ້ 1 ແລະ 2: ພາຍໃນ 6 ເດືອນ ພາຍຫຼັງວັນທີມີຜົນສັກສິດ ແລະ ຫຼັງຈາກນັ້ນ ໃຫ້ຈັດຕັ້ງປະຕິບັດຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU |

| ບັນດາມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| | ໂຄງການ SEADRM II ໃຫ້ສອດຄ່ອງກັບ ມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ (ESSs) ທີ່ກ່ຽວຂ້ອງ.<br>2. ສອດແຊກ ແລະ ຈັດຕັ້ງປະຕິບັດ ບັນດາຂໍ້ກຳນົດດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງຄູ່ມືການຕອບໂຕ້ເຫດການສຸກເສີນ (CERC Manual) ໃຫ້ສອດຄ່ອງກັບ CERC-ESMF ຫຼື ເອກະສານເພີ່ມເຕີມຂອງ ESMF, ລວມທັງການປະເມີນ ແລະ ແຜນການຕ່າງໆ ທີ່ໄດ້ກຳນົດໄວ້ໃນນັ້ນ. | | |
| 1.5 | **ສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງ**<br>ໃນກໍລະນີທີ່ມີການກຳນົດພົບ ສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງ (Associated Facility) ໃນໄລຍະການຈັດຕັ້ງປະຕິບັດໂຄງການ, ການປະເມີນດ້ານສິ່ງແວດລ້ອມ ແລະ ສັງຄົມ (ທີ່ດຳເນີນສຳລັບໂຄງການຍ່ອຍ ແລະ/ຫຼື ກິດຈະກຳຕ່າງໆຂອງໂຄງການ) ຈະຕ້ອງໄດ້ກຳນົດ ແລະ ປະເມີນຄວາມສ່ຽງ ແລະ ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງດັ່ງກ່າວ ໃນຂອບເຂດທີ່ເໝາະສົມ. ໂດຍອີງໃສ່ຜົນຂອງການປະເມີນ, ໜ່ວຍງານຄຸ້ມຄອງໂຄງການ (PMU) ຈະຕ້ອງແກ້ໄຂຄວາມສ່ຽງ ແລະ ຜົນກະທົບຂອງສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງ ໃນຮູບແບບທີ່ສອດຄ່ອງກັບລະດັບການຄວບຄຸມ ຫຼື ອິດທິພົນທີ່ມີຕໍ່ສິ່ງອຳນວຍຄວາມສະດວກນັ້ນ, ແລະ ໃຫ້ສອດຄ່ອງກັບຂໍ້ກຳນົດທີ່ກ່ຽວຂ້ອງ ທີ່ໄດ້ລະບຸໄວ້ໃນ ESCP ສະບັບນີ້ ແລະ ມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ (ESSs) ທີ່ກ່ຽວຂ້ອງ. | ໃຫ້ຈັດຕັ້ງປະຕິບັດຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMU C1<br>▪ ຜູ້ຮັບເໝົາ |
| **ມສສ 2: ແຮງງານ ແລະ ເງື່ອນໄຂການເຮັດວຽກ** | | | |
| 2.1 | **ຂັ້ນຕອນການຄຸ້ມຄອງແຮງງານ**<br>ຮັບຮອງ ແລະ ຈັດຕັ້ງປະຕິບັດ ຂັ້ນຕອນການຄຸ້ມຄອງແຮງງານ (LMP) – ໃນຮູບແບບທີ່ລວມເອົາບັນດາຂໍ້ກຳນົດທີ່ກ່ຽວຂ້ອງຂອງ LMP ເຂົ້າໃນແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ສະເພາະພື້ນທີ່ (SS-ESMP), ເຄື່ອງມືອື່ນໆທີ່ກ່ຽວຂ້ອງສະເພາະພື້ນທີ່, ແລະ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງຜູ້ຮັບເໝົາ (C-ESMP) ສຳລັບໂຄງການຍ່ອຍວຽກກໍ່ສ້າງ ແລະ ການສຶກສາດ້ານເຕັກນິກ – ຕາມຄວາມເໝາະສົມ. | ຮັບຮອງ ແລະ ຈັດຕັ້ງປະຕິບັດ ພາຍຫຼັງວັນທີມີຜົນສັກສິດ ແລະ ປະຕິບັດຕໍ່ເນື່ອງຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs<br>▪ ບໍລິສັດທີ່ປຶກສາ<br>▪ ຜູ້ຮັບເໝົາ |
| 2.2 | **ແຜນການຄຸ້ມຄອງອາຊີບ, ສຸຂະພາບ ແລະ ຄວາມປອດໄພ**<br>ກະກຽມ ແລະ ຈັດຕັ້ງປະຕິບັດ ແຜນການຄຸ້ມຄອງສຸຂະພາບ ແລະ ຄວາມປອດໄພ ດ້ານອາຊີບ (OHS Management Plan) ເຊິ່ງເປັນສ່ວນໜຶ່ງຂອງ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ສະເພາະພື້ນທີ່ | ກ່ອນການເລີ່ມຕົ້ນຈັດຕັ້ງປະຕິບັດກິດຈະກຳຂອງໂຄງການຍ່ອຍຢູ່ໃນພາກສະໜາມ, ແລະ ຫຼັງຈາກນັ້ນ ໃຫ້ຈັດຕັ້ງປະຕິບັດຕໍ່ເນື່ອງຕະຫຼອດໄລຍະ | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs |

| ບັນດາມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| | (SS-ESMP) ສໍາລັບທຸກໆ ໂຄງການຍ່ອຍວຽກກໍ່ສ້າງ ແລະ ການສຶກສາດ້ານເຕັກນິກ – ຕາມຄວາມເໝາະສົມ.<br><br>ກໍານົດໃຫ້ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຊ່ວງ ຂອງໂຄງການຍ່ອຍວຽກກໍ່ສ້າງ ກະກຽມ ແລະ ຈັດຕັ້ງປະຕິບັດ ແຜນວຽກສຸຂະພາບ ແລະ ຄວາມປອດໄພ ດ້ານອາຊີບ (OHS Plan) - ເຊິ່ງເປັນສ່ວນໜຶ່ງຂອງ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງຜູ້ຮັບເໝົາ (Contractor-ESMP), ແລະ ໃຫ້ສອດຄ່ອງກັບ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMPs) ທີ່ໄດ້ຮັບການອະນຸມັດແລ້ວ ສໍາລັບແຕ່ລະໂຄງການຍ່ອຍ. | ເວລາຂອງການຈັດຕັ້ງປະຕິບັດໂຄງການ. | ▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs<br>▪ ບໍລິສັດທີ່ປຶກສາ<br>▪ ຜູ້ຮັບເໝົາ |
| 2.3 | ກົນໄກການຮ້ອງທຸກ ສໍາລັບແຮງງານໃນໂຄງການ<br>ສ້າງຕັ້ງ ແລະ ດໍາເນີນການ ກົນໄກການຮ້ອງທຸກ ສໍາລັບແຮງງານໃນໂຄງການ, ຕາມທີ່ໄດ້ລະບຸໄວ້ໃນຂັ້ນຕອນການຄຸ້ມຄອງແຮງງານ **(LMP),** ແລະ ໃຫ້ສອດຄ່ອງກັບ ມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ ຂໍ້ທີ **2 (ESS2).** | ກ່ອນການຈ້າງງານ ຫຼື ການເຮັດວຽກຮ່ວມກັບແຮງງານ, ແລະ ຫຼັງຈາກນັ້ນ ໃຫ້ຮັກສາ ແລະ ດໍາເນີນການກົນໄກດັ່ງກ່າວ ຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs<br>▪ ບໍລິສັດທີ່ປຶກສາ<br>▪ ຜູ້ຮັບເໝົາ |
| **ມສສ 3: ການນໍາໃຊ້ຊັບພະຍາກອນຢ່າງມີປະສິດທິພາບ ແລະ ການປ້ອງກັນ ແລະ ຄຸ້ມຄອງມົນລະພິດ** | | | |
| 3.1 | ແຜນຄຸ້ມຄອງສິ່ງເສດເຫຼືອ<br>ກະກຽມ ແລະ ຈັດຕັ້ງປະຕິບັດ ແຜນການຄຸ້ມຄອງສິ່ງເສດເຫຼືອ (WMP) ເຊິ່ງເປັນສ່ວນໜຶ່ງຂອງ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ສະເພາະພື້ນທີ່ (SS-ESMP) ແລະ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງຜູ້ຮັບເໝົາ (C-ESMP) ສໍາລັບແຕ່ລະໂຄງການຍ່ອຍ, ເພື່ອຄຸ້ມຄອງຂີ້ເຫຍື້ອອັນຕະລາຍ ແລະ ຂີ້ເຫຍື້ອທົ່ວໄປ (ບໍ່ເປັນອັນຕະລາຍ), ໃຫ້ສອດຄ່ອງກັບ ມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ ຂໍ້ທີ 3 (ESS3). | ກ່ອນການຈັດຊື້-ຈັດຈ້າງສັນຍາວຽກກໍ່ສ້າງ ແລະ ກ່ອນການເລີ່ມຕົ້ນໂຄງການຍ່ອຍ, ແລະ ຫຼັງຈາກນັ້ນ ໃຫ້ຈັດຕັ້ງປະຕິບັດຕໍ່ເນື່ອງຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs<br>▪ ບໍລິສັດທີ່ປຶກສາ<br>▪ ຜູ້ຮັບເໝົາ |
| 3.2 | ການນໍາໃຊ້ຊັບພະຍາກອນຢ່າງມີປະສິດທິພາບ ແລະ ການປ້ອງກັນ ແລະ ຄຸ້ມຄອງມົນລະພິດ<br>1.ສອດແຊກມາດຕະການການນໍາໃຊ້ຊັບພະຍາກອນຢ່າງມີປະສິດທິພາບ ແລະ ການປ້ອງກັນ ແລະ ຄຸ້ມຄອງມົນ | ຂໍ້ 1 ແລະ 2: ໃຫ້ປະຕິບັດຕາມກໍານົດເວລາອັນ | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ |



Official Use Only

| ບັນດາມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| | ລະພິດ ເຂົ້າໃນແຜນ ESMP ແລະ C-ESMP ທີ່ຈະຖືກກະກຽມພາຍໃຕ້ກິດຈະກຳ 1.1 ທີ່ກ່າວມາຂ້າງເທິງ.<br>2.ສຳລັບແຕ່ລະໂຄງການຍ່ອຍ, ໃຫ້ກະກຽມແຜນ SS-ESMPs ແລະ ຊຸກຍູ້ໃຫ້ຜູ້ຮັບເໝົາກະກຽມ ແລະ ຈັດຕັ້ງປະຕິບັດແຜນ C-ESMPs ທີ່ລວມມີການຄວບຄຸມມົນລະພິດທາງນ້ຳຢ່າງລະອຽດ ເຊັ່ນ: ການຄຸ້ມຄອງຄວາມຂຸ່ນ ແລະ ການຟຸ້ງກະຈາຍຂອງຂີ້ຕົມ; ລາຍລະອຽດວິທີການຂຸດລອກ (ຕາມຄວາມຈຳເປັນ); ການຄວບຄຸມດິນຂຸດ ແລະ ຂີ້ຕົມ; ການກັກເກັບນ້ຳລ້າງເບຕົງ; ການເກັບຮັກສາເຊື້ອໄຟ/ສານເຄມີ ແລະ ການປ້ອງກັນ/ຕອບໂຕ້ການຮົ່ວໄຫຼ; ການຄຸ້ມຄອງນ້ຳຝົນ; ການຄວບຄຸມການກັດເຊາະ/ຕະກອນ; ແລະ ການຄຸ້ມຄອງນ້ຳເສຍ. | ດຽວກັນກັບ ການກະກຽມ ແລະ ການຈັດຕັ້ງປະຕິບັດແຜນ ESMPs ແລະ C-ESMP. | CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs<br>▪ ບໍລິສັດທີ່ປຶກສາ<br>▪ ຜູ້ຮັບເໝົາ |
| **ມສສ 4: ສຸຂະພາບ ແລະ ຄວາມປອດໄພ ຂອງຊຸມຊົນ** | | | |
| 4.1 | **ຄວາມປອດໄພທາງທະໜົນ ແລະ ການຈະລາຈອນ**<br>ສອດແຊກມາດຕະການຕ່າງໆ ເພື່ອຄຸ້ມຄອງຄວາມສ່ຽງດ້ານການຈະລາຈອນ ແລະ ຄວາມປອດໄພທາງບົກ ເຂົ້າໃນແຜນ SS-ESMP ແລະ C-ESMP (ສຳລັບໂຄງການຍ່ອຍວຽກກໍ່ສ້າງ ທີ່ຈະຖືກກະກຽມພາຍໃຕ້ກິດຈະກຳ 1.1 ທີ່ກ່າວມາຂ້າງເທິງ), ແລະ ຈັດຕັ້ງປະຕິບັດມາດຕະການເຫຼົ່ານີ້ຢ່າງເໝາະສົມ. | ໃຫ້ປະຕິບັດຕາມກຳນົດເວລາອັນດຽວກັນກັບການກະກຽມ ແລະ ການຈັດຕັ້ງປະຕິບັດແຜນ ESMPs ແລະ C-ESMP. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs<br>▪ ບໍລິສັດທີ່ປຶກສາ<br>▪ ຜູ້ຮັບເໝົາ |
| 4.2 | **ຄວາມປອດໄພ ຂອງຊຸມຊົນ**<br>ປະເມີນ ແລະ ຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບຕໍ່ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ (CHS) ໃນໄລຍະການຈັດຕັ້ງປະຕິບັດໂຄງການ, ໂດຍສະເພາະແມ່ນໃນໄລຍະການກໍ່ສ້າງ ແລະ ການດຳເນີນງານຂອງໂຄງການຍ່ອຍວຽກກໍ່ສ້າງ. ມາດຕະການຜ່ອນເບົາ ອາດລວມມີ, ແລະ ອື່ນໆ: ລະບຽບວິໄນ ແລະ ພຶດຕິກຳຂອງແຮງງານໃນໂຄງການ, ຄວາມສ່ຽງຈາກການຈົມນ້ຳ (ເຊັ່ນ: ເດັກນ້ອຍ) ເນື່ອງຈາກການລອຍນ້ຳ, ການຫຼິ້ນ, ແລະ ການຫາປາຢູ່ໃນ ແລະ ໃກ້ກັບບໍລິເວນແມ່ນ້ຳ, ຄວາມສ່ຽງຈາກການແຜ່ລະບາດ ແລະ ການຕິດເຊື້ອພະຍາດຕິດຕໍ່ (ເຊັ່ນ: ໄຂ້ຫວັດຕາມລະດູການ, ພະຍາດຕິດຕໍ່ທາງເພດສຳພັນ) ທີ່ເກີດຈາກການເຂົ້າມາຂອງແຮງງານຈຳນວນຫຼາຍ.<br>ດຳເນີນການຄັດກອງ ແລະ ປະເມີນຄວາມສ່ຽງດ້ານການປ່ຽນແປງສະພາບພູມອາກາດ ແລະ ໄພພິບັດ ສຳລັບທຸກໆໂຄງການຍ່ອຍ ແລະ ນຳເອົາຜົນການປະເມີນນັ້ນ ເຂົ້າໃນການກຳນົດທີ່ຕັ້ງ, ເກນການອອກແບບ, ຂັ້ນຕອນການ | ໃຫ້ປະຕິບັດຕາມກຳນົດເວລາອັນດຽວກັນກັບການກະກຽມ ແລະ ການຈັດຕັ້ງປະຕິບັດແຜນ ESMPs ແລະ C-ESMP. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs<br>▪ ບໍລິສັດທີ່ປຶກສາ<br>▪ ຜູ້ຮັບເໝົາ |

| | ບັນດາມາດຕະການ ແລະ ການປະຕິບັດທີ່ສຳຄັນ | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| | ກໍ່ສ້າງ, ຂັ້ນຕອນການດຳເນີນງານ, ມາດຕະການຜ່ອນເບົາ ແລະ ມາດຕະການກຽມພ້ອມຮັບມືກັບເຫດການສຸກເສີນ.<br>ສຳລັບໂຄງການຍ່ອຍທີ່ຕັ້ງຢູ່ໃນພື້ນທີ່ທີ່ມີຄວາມສ່ຽງຈາກລະເບີດທີ່ບໍ່ທັນແຕກ (UXO), ໂຄງການຈະຕ້ອງຮັກສາມາດຕະການປ້ອງກັນໄວ້ລ່ວງໜ້າ ເພື່ອຮັບປະກັນຄວາມປອດໄພຂອງຊຸມຊົນ ແລະ ແຮງງານ. ເອກະສານ ESMF ແລະ ESMP ສະເພາະພື້ນທີ່ ຈະຕ້ອງກຳນົດໃຫ້ມີການສຳຫຼວດ UXO ກ່ອນການເລີ່ມຕົ້ນວຽກກໍ່ສ້າງທຸກຄັ້ງ, ເຖິງແມ່ນວ່າຈະຢູ່ໃນພື້ນທີ່ທີ່ຖືກປະເມີນວ່າເປັນເຂດທີ່ມີຄວາມສ່ຽງຕໍ່າກໍຕາມ.<br>ລວມເອົາມາດຕະການຜ່ອນເບົາເຂົ້າໃນແຜນ ESMP ສະເພາະພື້ນທີ່ ແລະ ແຜນ C-ESMP (ສຳລັບໂຄງການຍ່ອຍວຽກກໍ່ສ້າງ) ທີ່ຈະຖືກກຳນົດ ແລະ ກະກຽມໃຫ້ສອດຄ່ອງກັບເອກະສານ ESMF. | | |
| 4.3 | **ຄວາມສ່ຽງດ້ານການຂູດຮີດທາງເພດ, ການລ່ວງລະເມີດທາງເພດ ແລະ ການຄຸກຄາມທາງເພດ**<br>ຄັດກອງ ແລະ ປະເມີນຄວາມສ່ຽງດ້ານການຂູດຮີດທາງເພດ, ການລ່ວງລະເມີດທາງເພດ ແລະ ການຄຸກຄາມທາງເພດ (SEA/SH) ທີ່ຕິດພັນກັບໂຄງການຍ່ອຍວຽກກໍ່ສ້າງ. ຫາກຄວາມສ່ຽງ SEA/SH ຖືກຈັດຢູ່ໃນລະດັບປານກາງ ຫຼື ສູງກວ່າ, ໃຫ້ກະກຽມ ແລະ ຈັດຕັ້ງປະຕິບັດ ແຜນປະຕິບັດງານ SEA/SH – ເຊິ່ງເປັນສ່ວນໜຶ່ງຂອງແຜນ SS-ESMP ແລະ C-ESMP ທີ່ກ່ຽວຂ້ອງ. | ໃຫ້ປະຕິບັດຕາມກຳນົດເວລາອັນດຽວກັນກັບການກະກຽມ ແລະ ການຈັດຕັ້ງປະຕິບັດແຜນ ESMPs ແລະ C-ESMP. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs<br>▪ ບໍລິສັດທີ່ປຶກສາ<br>▪ ຜູ້ຮັບເໝົາ |
| **ມສສ 5:** | **ການຈັດສັນທີ່ດິນ, ການຈຳກັດການນຳໃຊ້ທີ່ດິນ ແລະ ການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ** | | |
| 5.1 | **ກອບການຍົກຍ້າຍຈັດສັນ**<br>1. ຮັບຮອງ ແລະ ຈັດຕັ້ງປະຕິບັດ ຂອບນະໂຍບາຍການຍົກຍ້າຍຈັດສັນ (RPF) ສຳລັບໂຄງການ, ໃຫ້ສອດຄ່ອງກັບ ມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ ຂໍ້ທີ 5 (ESS5).<br>2. ກະກຽມ ແລະ ຈັດຕັ້ງປະຕິບັດ ແຜນການຍົກຍ້າຍຈັດສັນ (RPs) ສຳລັບໂຄງການຍ່ອຍວຽກກໍ່ສ້າງທີ່ກ່ຽວຂ້ອງ, ໃຫ້ສອດຄ່ອງກັບ ມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ ຂໍ້ທີ 5 (ESS5). | 1. ຫຼັງຈາກ ວັນທີມີຜົນສັກສິດ (Effective Date) ແລະ ຫຼັງຈາກນັ້ນ ໃຫ້ຈັດຕັ້ງປະຕິບັດຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ.<br>2. ກ່ອນການເລີ່ມຕົ້ນໂຄງການຍ່ອຍ, ແລະ ຫຼັງຈາກນັ້ນ ໃຫ້ຈັດຕັ້ງປະຕິບັດຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs |
| **ມສສ 6:** | **ການອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ມີຊີວິດແບບຍືນຍົງ** | | |
| 6.1 | **ຄວາມສ່ຽງ ແລະ ຜົນກະທົບ ຕໍ່ຊີວະນາໆພັນ** | | |

| ບັນດາມາດຕະການ ແລະ ການປະຕິບັດທີ່ສໍາຄັນ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| | ໂຄງການຍ່ອຍທີ່ສະເໜີຢູ່ ແຂວງຫຼວງພະບາງ **(LPB)** ແມ່ນຕັ້ງຢູ່ໃນເຂດອະນຸລັກຊີວະນາໆພັນທີ່ສໍາຄັນ **(KBA)** ຂອງແມ່ນໍ້າຂອງ ຊ່ວງແຕ່ຫຼວງພະບາງ ຫາ ນະຄອນຫຼວງວຽງຈັນ. ໃຫ້ດໍາເນີນການຄັດກອງຖິ່ນທີ່ຢູ່ອາໄສທີ່ສໍາຄັນ **(Critical Habitat Screening)** ໃນໄລຍະການຈັດຕັ້ງປະຕິບັດໂຄງການ ແລະ ຫາກມີຄວາມກ່ຽວຂ້ອງ, ໃຫ້ກະກຽມ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງ ຕາມທີ່ໄດ້ກໍານົດໄວ້ພາຍໃຕ້ມາດຕະຖານ **ESS6.**<br><br>ກະກຽມ ແລະ ຈັດຕັ້ງປະຕິບັດ ແຜນການຄຸ້ມຄອງຊີວະນາໆພັນ **(BMP)** ໃນກໍລະນີທີ່ມີຄວາມກ່ຽວຂ້ອງ ແລະ ໃຫ້ສອດຄ່ອງກັບມາດຕະຖານ **ESS6 –** ເຊິ່ງເປັນສ່ວນໜຶ່ງຂອງແຜນ **SS-ESMP** ແລະ **C-ESMP** ຂອງໂຄງການຍ່ອຍວຽກກໍ່ສ້າງ ໂດຍໃຫ້ສອດຄ່ອງກັບເອກະສານ **ESMF** ຂອງໂຄງການ ແລະ ມາດຕະຖານ **ESS6.** | ກ່ອນການຈັດຊື້-ຈັດຈ້າງ ສັນຍາວຽກກໍ່ສ້າງ ແລະ ກ່ອນການເລີ່ມຈັດຕັ້ງປະຕິບັດໂຄງການຍ່ອຍວຽກກໍ່ສ້າງຢູ່ພາກສະໜາມ, ແລະ ຫຼັງຈາກນັ້ນ ໃຫ້ຈັດຕັ້ງປະຕິບັດຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs<br>▪ ບໍລິສັດທີ່ປຶກສາ<br>▪ ຜູ້ຮັບເໝົາ |
| **ມສສ 7: ຊົນເຜົ່າ / ຊຸມຊົນທ້ອງຖິ່ນດັ້ງເດີມທີ່ດ້ອຍໂອກາດໃນໄລຍະຜ່ານມາ** | | | |
| 7.1 | **ກອບແຜນນະໂຍບາຍກ່ຽວກັບຊົນເຜົ່າ**<br>ກະກຽມ ແລະ ຈັດຕັ້ງປະຕິບັດ ແຜນການມີສ່ວນຮ່ວມຂອງຊົນເຜົ່າ (EGEP) ໃນກໍລະນີທີ່ມີຊົນເຜົ່າ (ຕາມເກນມາດຕະຖານ ESS7) ອາໄສຢູ່ໃນເຂດອິດທິພົນຂອງໂຄງການຍ່ອຍ – ໂດຍໃຫ້ສອດຄ່ອງກັບຄໍາແນະນໍາໃນເອກະສານ ESMF ແລະ ມາດຕະຖານ ESS7. | ກ່ອນການເລີ່ມຕົ້ນໂຄງການຍ່ອຍ, ແລະ ຫຼັງຈາກນັ້ນ ໃຫ້ຈັດຕັ້ງປະຕິບັດຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs<br>▪ ບໍລິສັດທີ່ປຶກສາ<br>▪ ຜູ້ຮັບເໝົາ |
| **ມສສ 8: ມໍລະດົກທາງວັດທະນະທໍາ** | | | |
| 8.1 | **ຄວາມສ່ຽງ ແລະ ຜົນກະທົບ ຕໍ່ມໍລະດົກທາງວັດທະນະທໍາ**<br>ສໍາລັບໂຄງການຍ່ອຍຢູ່ແຂວງຫຼວງພະບາງ, ການປະເມີນຜົນກະທົບຕໍ່ມໍລະດົກທາງວັດທະນະທໍາ (CHIA) ແລະ ແຜນຄຸ້ມຄອງມໍລະດົກທາງວັດທະນະທໍາ (CHMP) ຈະຕ້ອງໄດ້ຮັບການກະກຽມ ແລະ ຈັດຕັ້ງປະຕິບັດ ໂດຍຜ່ານການປຶກສາຫາລືຢ່າງໃກ້ຊິດກັບ ອົງການຢູເນສໂກ (UNESCO), ກົມມໍລະດົກ ແລະ ບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ກ່ອນການເລີ່ມຕົ້ນວຽກກໍ່ສ້າງໃນເຂດພື້ນທີ່ມໍລະດົກ. | ກ່ອນການເລີ່ມຕົ້ນໂຄງການຍ່ອຍ, ແລະ ຫຼັງຈາກນັ້ນ ໃຫ້ຈັດຕັ້ງປະຕິບັດຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດ |

| ບັນດາມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| | | | ໂຄງການPIUs<br>▪ ບໍລິສັດທີ່ປຶກສາ |
| 8.2 | ການຄົ້ນພົບໂດຍບັງເອີນ<br>ກຳນົດ ແລະ ຈັດຕັ້ງປະຕິບັດຂັ້ນຕອນການຈັດການໃນກໍລະນີຄົ້ນພົບໂດຍບັງເອີນ (Chance Finds Procedures), ເຊິ່ງເປັນສ່ວນໜຶ່ງຂອງແຜນ SS-ESMP ແລະ C-ESMP ສຳລັບບັນດາໂຄງການຍ່ອຍ | ກຳນົດຂັ້ນຕອນການຈັດການໃນກໍລະນີຄົ້ນພົບໂດຍບັງເອີນ (Chance Find Procedures) ໄວ້ໃນແຜນ SS-ESMPs ແລະ C-ESMPs. ພ້ອມທັງຈັດຕັ້ງປະຕິບັດຂັ້ນຕອນດັ່ງກ່າວຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs<br>▪ ບໍລິສັດທີ່ປຶກສາ<br>▪ ຜູ້ຮັບເໝົາ |
| ມສສ 9: ຕົວກາງທາງການເງິນ [ມາດຕະຖານນີ້ແມ່ນກ່ຽວຂ້ອງສະເພາະກັບໂຄງການທີ່ກ່ຽວຂ້ອງກັບຕົວກາງທາງດ້ານການເງິນ | | | |
| 9.1 | ລະບົບການຄຸ້ມຄອງສິ່ງແວດລ້ອມ ແລະສັງຄົມ (ESMS)<br>- ບໍ່ກ່ຽວຂ້ອງໃນປັດຈຸບັນ. | | |
| ມສສ 10: ການມີສ່ວນຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ແລະ ການເຜີຍແຜ່ຂໍ້ມູນ | | | |
| 10.1 | ແຜນການມີສ່ວນຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ<br>ປັບປຸງ ແລະ ຈັດຕັ້ງປະຕິບັດ ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ (SEP) ສຳລັບໂຄງການ ໃຫ້ສອດຄ່ອງກັບມາດຕະຖານ ESS10, ເຊິ່ງລວມມີມາດຕະການຕ່າງໆ ເພື່ອ: ຊອກຫາ ແລະ ສະໜອງຂໍ້ມູນໃຫ້ແກ່ຜູ້ມີສ່ວນໄດ້ສ່ວນເສຍ ຢ່າງທັນການ, ກ່ຽວຂ້ອງ, ເຂົ້າໃຈງ່າຍ ແລະ ສາມາດເຂົ້າເຖິງໄດ້; ພ້ອມທັງປຶກສາຫາລືກັບພວກເຂົາໃນຮູບແບບທີ່ເໝາະສົມກັບວັດທະນະທຳ, ໂດຍປາສະຈາກການຄອບງຳ, ການແຊກແຊງ, ການບັງຄັບຂົ່ມຂູ່, ການຈຳແນກ ແລະ ການຂົ່ມຂູ່ໃດໆ. | ຫຼັງຈາກວັນທີທີ່ມີຜົນສັກສິດ ແລະ ຈັດຕັ້ງປະຕິບັດຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດໂຄງການPIUs |
| 10.2 | ກົນໄກການຮ້ອງທຸກຂອງໂຄງການ<br>ສ້າງຕັ້ງ, ເຜີຍແຜ່, ນຳໃຊ້, ແລະ ຮັກສາກົນໄກການຮ້ອງທຸກທີ່ສາມາດເຂົ້າເຖິງໄດ້ ເພື່ອຮັບ ແລະ ອຳນວຍຄວາມສະດວກໃນການແກ້ໄຂຂໍ້ຂ້ອງໃຈ ແລະ ຄຳຮ້ອງທຸກ ທີ່ກ່ຽວຂ້ອງກັບໂຄງການ ໃຫ້ມີຄວາມວ່ອງໄວ ແລະ ມີປະສິດທິຜົນ. ການແກ້ໄຂຄຳຮ້ອງທຸກຈະຕ້ອງດຳເນີນໄປໃນຮູບແບບທີ່ໂປ່ງໃສ, ເໝາະສົມກັບວັດທະນະທຳ, ແລະ ສາມາດເຂົ້າເຖິງໄດ້ໂດຍທຸກພາກສ່ວນທີ່ໄດ້ຮັບຜົນກະທົບຈາກໂຄງການ ໂດຍບໍ່ເສຍຄ່າໃຊ້ຈ່າຍ ແລະ ບໍ່ມີການ | ສ້າງຕັ້ງກົນໄກການຮ້ອງທຸກໃຫ້ສຳເລັດພາຍໃນ 6 ເດືອນທຳອິດ ຂອງການຈັດຕັ້ງປະຕິບັດໂຄງການ ແລະ ຫຼັງຈາກນັ້ນ ແມ່ນໃຫ້ຮັກສາ ແລະ ນຳໃຊ້ກົນໄກດັ່ງກ່າວຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ. | ▪ ໜ່ວຍງານຄຸ້ມຄອງໂຄງການ PMU<br>▪ ໜ່ວຍງານຄຸ້ມຄອງອົງປະກອບ CMUs<br>▪ ໜ່ວຍງານຈັດຕັ້ງປະຕິບັດ |



Official Use Only

| ບັນດາມາດຕະການ ແລະ ການປະຕິບັດທີ່ສຳຄັນ | | ກອບເວລາ | ໜ່ວຍງານທີ່ຮັບຜິດຊອບ |
|---|---|---|---|
| | ຈອງເວນຄືນ (ການແກ້ແຄ້ນ). ພາກສ່ວນທີ່ໄດ້ຮັບຜົນກະທົບຈາກໂຄງການ ລວມມີ: ແຮງງານຂອງໂຄງການ, ຜູ້ລອດຊີວິດຈາກການຂູດລີດທາງເພດ ແລະ ການຄຸກຄາມທາງເພດ (SEA/SH), ຊຸມຊົນທ້ອງຖິ່ນ ແລະ ສາທາລະນະຊົນທົ່ວໄປ. ຂໍ້ຂ້ອງໃຈ ແລະ ຄຳຮ້ອງທຸກ ສາມາດຍື່ນໄດ້ແບບບໍ່ປະສົງອອກຊື່, ໃນຮູບແບບທີ່ສອດຄ່ອງກັບມາດຕະຖານ ESS10.<br><br>ກົນໄກການຮ້ອງທຸກດັ່ງກ່າວ ຈະຕ້ອງໄດ້ຮັບການອອກແບບເພື່ອຮັບ, ລົງທະບຽນ, ຮັບຊາບ, ແລະ ອຳນວຍຄວາມສະດວກໃນການແກ້ໄຂຄຳຮ້ອງທຸກກ່ຽວກັບ SEA/SH, ລວມທັງການສົ່ງຕໍ່ຜູ້ລອດຊີວິດໄປຫາຜູ້ສະໜອງບໍລິການທີ່ກ່ຽວຂ້ອງກັບຄວາມຮຸນແຮງທາງເພດໃນທ້ອງຖິ່ນ – ໃນຮູບແບບທີ່ປອດໄພ, ເກັບຮັກສາຄວາມລັບ, ແລະ ຖືເອົາຜູ້ລອດຊີວິດເປັນສູນກາງ. | | ໂຄງການPIUs<br>▪ ບໍລິສັດທີ່ປຶກສາ<br>▪ ຜູ້ຮັບເໝົາ |

**ຕົວຊີ້ວັດຄວາມພ້ອມໃນການຈັດຕັ້ງປະຕິບັດ**

ບັນດາການເຄື່ອນໄຫວລຸ່ມນີ້ ແມ່ນຕົວຊີ້ບອກເຖິງຄວາມພ້ອມໃນການຈັດຕັ້ງປະຕິບັດ:

1. **ພະນັກງານດ້ານສິ່ງແວດລ້ອມ ແລະ ສັງຄົມ** ໄດ້ຮັບການແຕ່ງຕັ້ງຢູ່ທີ່ ໜ່ວຍງານຄຸ້ມຄອງໂຄງການຂັ້ນສູນກາງ (PMU), ໜ່ວຍງານຄຸ້ມຄອງໂຄງການຂັ້ນທ້ອງຖິ່ນ (CMUs) ແລະ ໜ່ວຍງານຈັດຕັ້ງປະຕິບັດໂຄງການ (PIUs).
2. **ເອກະສານດ້ານສິ່ງແວດລ້ອມ ແລະ ສັງຄົມ (E&S)** (ບັນດາເອກະສານໂຄງຮ່າງ) ໄດ້ຖືກຈັດກຽມ ແລະ ເປີດເຜີຍ ເພື່ອການປະເມີນຜົນໂຄງການ.
3. **ການຝຶກອົບຮົມດ້ານການຄຸ້ມຄອງ E&S** ລວມທັງວຽກງານຄວາມປອດໄພ ແລະ ສຸຂະພາບອາຊີບ (OHS) ໄດ້ຖືກຈັດຂຶ້ນໃຫ້ແກ່ PMU, CMUs ແລະ PIUs.
4. **ບໍລິສັດທີ່ປຶກສາກວດກາເຕັກນິກການກໍ່ສ້າງ (CSC)** ໄດ້ຮັບການແຕ່ງຕັ້ງ ເພື່ອຕິດຕາມກວດກາການຈັດກຽມ ແລະ ການຈັດຕັ້ງປະຕິບັດບັນດາເຄື່ອງມືພາຍໃຕ້ຂອບມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມ (ESF) ທີ່ກ່ຽວຂ້ອງ.
5. **ຜູ້ມີສ່ວນໄດ້ສ່ວນເສຍທັງໝົດທີ່ກ່ຽວຂ້ອງກັບໂຄງການ** ລວມທັງ ອົງການ UNESCO, ຄະນະກຳມະການແມ່ນ້ຳຂອງ (MRC) ແລະ ບັນດາປະເທດໃນເຂດລຸ່ມແມ່ນ້ຳຂອງ ໄດ້ຮັບການປຶກສາຫາລື ຫຼື ແຈ້ງໃຫ້ຊາບ ກ່ຽວກັບບັນດາກິດຈະກຳທີ່ກ່ຽວຂ້ອງຂອງໂຄງການ.



Official Use Only